# ໂຮງຮຽນວັນອາທິດ

**ວັນອາທິດ ທີ 15 ເດືອນພຶສຈິກາ 2020 (11-15-2020)**

---

## ຍຶດໝັ້ນຕໍ່ຄຳອະທິຖານ

ວິທີການສື່ສານພົວພັນແບບໃດທີ່ທ່ານມັກ?

**ຈຸດສຳຄັນໃນບົດຮຽນ:** ຄຳໝັ້ນສັນຍາທີ່ຈະອະທິຖານສຳລັບຄວາມລອດແລະການເຕີບໂຕທາງວິນຍານຂອງຄົນອື່ນ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ຖ້າທ່ານຕ້ອງການໂທຣະສັບໄປຫາປະທານາທິບໍດີສະຫະຣັດອາເມຣິກາ, ເລກໂທຣະສັບທຳນຽບຂາວແມ່ນ 202-456-1414-ພຽງແຕ່ຢ່າຫວັງວ່າຈະໄດ້ເວົ້າລົມຕົວຕໍ່ຕົວກັບປະທານາທິບໍດີໂດຍກົງ.

ນັ້ນບໍ່ແມ່ນຈະເກີດຂຶ້ນສເມີໄປ. ທຳນຽບຂາວມີພຽງແຕ່ເບີໂທຣະສັບດຽວ-ແລະມັນຢູ່ໃນຫ້ອງໂຖງຈາກຫ້ອງການບໍລິຫານ. ຖ້າທ່ານໂທຫາທຳນຽບຂາວໃນປີ 1893, ທ່ານປະທານາທິບໍດີ Grover Cleveland ໄດ້ຕອບຄຳຮຽກຮ້ອງນັ້ນໂດຍກົງ. ມັນເປັນພາບທີ່ໜ້າຕົກໃຈໃນຄວາມທັນສມັຍຂອງໂທຣະສັບມືຖືຂອງທຸກວັນນີ້. ໃນປີ 1893, ສະຫະຣັດອາເມຣິກາກຳລັງຢູ່ໃນລະຍະທີ່ຈະເປັນຜູ້ທີ່ມີຄວາມຄ່ອງແຄ້ວໃນການເມືອງໂລກ, ແຕ່ວ່າຜູ້ໃດທີ່ມີໂທຣະສັບສາມາດຈະໂທຣະສັບແລະລົມກັບປະທານາທິບໍດີເອງ.

ເວລານັ້ນໝົດໄປນານແລ້ວທີ່ປະທານາທິບໍດີຈະຍົກໂທຣະສັບຂຶ້ນຕອບເອງ. ແຕ່ນັ້ນບໍ່ແມ່ນກໍລະນີທີ່ມີພະລັງອຳນາດນຶ່ງ. ພວກເຮົາມີອຳນາດອະທິປະໄຕຕິດຕໍ່ໂດຍກົງຫາຜູ້ມີອຳນາດສູງສຸດ, ພຣະເຈົ້າຜູ້ມີອຳນາດທັງໝົດແລະເປັນຜູ້ສ້າງຈັກກະວານ, ເປັນສາຍສຳພັນທີ່ພວກເຮົາຄວນຖືເອົາເປັນສິ່ງສຳຄັນທີ່ສຸດ. ພຣະເຈົ້າຮຽກຮ້ອງໃຫ້ພວກເຮົາເວົ້າລົມກັບພຣະອົງ-ພຣະອົງເຊື້ອເຊີນພວກເຮົາໃຫ້ເວົ້າລົມກັບພຣະອົງ. ທີ່ພວກເຮົາເອີ້ນວ່າການອະທິຖານ, ນີ້ເປັນສິດທິພິເສດອັນຍິ່ງໃຫ່ຍທີ່ພຣະເຈົ້າໄດ້ເອົາໃຫ້ກັບພວກເຮົາໃຫ້ເວົ້າກັບພຣະອົງໂດຍກົງ.

**ພຣະຄັມພີກ່າວວ່າຢ່າງໃດ?** (ເບິ່ງຕາມຫົວຂໍ້ 1, 2, ແລະ 3,)

### <u>ສຶກສາພຣະຄັມພີ</u>

### 1. ໂກໂລຊາຍ 1:3-6ກ

3ເມື່ອເຮົາອ້ອນວອນເພື່ອເຈົ້າທັງຫຼາຍເຮົາກໍຂອບພຣະຄຸນພຣະບິດາເຈົ້າຂອງພຣະເຢຊູຄຣິດເຈົ້າຂອງເຮົາທັງຫຼາຍຢູ່
ສເມີ. 4 ເພາະພວກເຮົາໄດ້ຍິນເຖິງຄວາມເຊື່ອຂອງເຈົ້າທັງຫຼາຍໃນພຣະເຢຊູຄຣິດແລະເຣື່ອງຄວາມຮັກຊຶ່ງພວກເຈົ້າມີ
ຕໍ່ໄພ່ພົນທັງປວງຂອງພຣະເຈົ້າ. 5ໂດຍເຫດຊຶ່ງມີຄວາມຫັວງທີ່ຊົງຮັກສາໄວ້ສຳລັບເຈົ້າທັງຫຼາຍໃນສວັນຊຶ່ງເມື່ອກ່ອນ
ພວກເຈົ້າເຄີຍໄດ້ຍິນມາແລ້ວໃນຄຳອັນສັດຈິງຄືຂ່າວປະເສີດນັ້ນ. ໖ຊຶ່ງແຜ່ຜາຍມາເຖິງເຈົ້າທັງຫຼາຍ.

ໃນພຣະທັມໂກໂລຊາຍພວກເຮົາພົບເຫັນຂໍ້ນຶ່ງທີ່ສຳຄັນທີ່ສຸດໃນພຣະຄັມພີກ່ຽວກັບການອະທິຖານແລະສິ່ງທີ່ມັນຄວນຈະເປັນໃນຊີວິດຂອງເຮົາ. ອັຄສາວົກໂປໂລໄດ້ສະແດງໃຫ້ພວກເຮົາເຫັນວ່າການອະທິຖານເປັນສິ່ງສຳຄັນຕໍ່ຄຣິສຕະຈັກຫຼາຍກ່ວາທີ່ພວກເຮົາເຂົ້າໃຈ. ໃນຂໍ້ຄວາມນີ້ພວກເຮົາເຫັນສາມວິທີທາງທີ່ພວກເຮົາສາມາດອະທິຖານການຖວາຍການສັຣເສີນພຣະກຽດຂອງພຣະເຈົ້າແລະສຸຂພາບຂອງຄຣິສຕະຈັກ. ໜ້າທີ່ອັນຫຼັກ, ຄືພວກເຮົາຄວນອະທິຖານດ້ວຍການຂອບໃຈສຳລັບຜູ້ເຊື່ອຄົນອື່ນໆ.

ຄຳອະທິຖານແລະຄຳຂອບພຣະຄຸນຂອງທ່ານໂປໂລສຳລັບພວກເຂົາແມ່ນບໍ່ມີວັນປ່ຽນແປງແລະບໍ່ປ່ຽນໄປ. ຜູ້ທີ່ເຊື່ອຫຼວງຫຼາຍຈະນຳເອົາພຣະພອນຈາກການອະທິຖານທີ່ມີຄຸນຄ່າຂອງພຣະເຈົ້າແລະນຳມາໃຊ້ເມື່ອພວກເຂົາມີບັນ

ຫາຫຼືບາງທີກ່ອນຮັບປະທານອາຫານ. ສຳລັບທ່ານໂປໂລ, ນີ້ແມ່ນການເດີນຂອງທ່ານໄປກັບພຣະຄຣິດໃນແຕ່ລະວັນ. ທ່ານໂປໂລໄດ້ຂອບພຣະຄຸນຄຣິສຈັກຍ້ອນວ່າ "ເຊື່ອສັດທາໃນພຣະເຢຊູຄຣິດ" ຂອງພວກເຂົາ. ທ່ານໄດ້ຍິນກ່ຽວກັບຄວາມຮັກຂອງພວກເຂົາທີ່ມີຕໍ່ກັນແລະກັນແລະຄວາມຫວັງທີ່ພວກເຂົາມີ-ຄວາມຫວັງຮາກຖານແລະກໍ່ຕັ້ງຂຶ້ນໃນຄວາມຈິງຂອງຂ່າວປະເສີດທີ່ມາສູ່ພວກເຂົາ.

ມັນເປັນສິ່ງທີ່ສຳຄັນທີ່ຈະຢຸດຢູ່ທີ່ນີ້ແລະຈົດຈຳຄວາມເປັນຈິງແບບງ່າຍໆ. ພວກເຮົາບໍ່ເຄີຍໝາຍຄວາມວ່າຈະນັ່ງເປັນແຖວທີ່ຂ້າງທາງ, ຕົບມືໃຫ້ກັບທ່ານໂປໂລແລະກໍເວົ້າ, "ໂອ, ໂປໂລ, ຂອບໃຈທ່ານຫຼາຍໆທີ່ອະທິຖານຕໍ່ພຣະເຈົ້າເພື່ອຄວາມແຂງແກ່ນຂອງຄຣິສຕະຈັກເລື້ອຍມາ." ແມ່ນແລ້ວ, ອາຈານໂປໂລເຮັດໄດ້ດີສຸດຍອດ, ແຕ່ທ່ານຍັງໄດ້ໃຫ້ຕົວຢ່າງໃຫ້ກັບພວກເຮົາໃນການດຳເນີນຊີວິດຂອງພວກເຮົາ. ແຕ່ພວກເຮົາຫຼາຍຄົນມີພຽງແຕ່ອະທິຖານກ່ຽວກັບເລື່ອງຕ່າງໆທີ່ສົ່ງຜົນກະທົບຕໍ່ຊີວິດຂອງພວກເຮົາເອງ. ພຣະເຈົ້າຕ້ອງການໃຫ້ພວກເຮົາເຮັດຢ່າງນັ້ນແລະພວກເຮົາກໍ່ເຮັດຢູ່ຢ່າງນັ້ນ, ແຕ່ຊີວິດການອະທິຖານຂອງພວກເຮົາບໍ່ໄດ້ມີຄວາມຫັວງວ່າຈະເລີ້ມຕົ້ນແລະສິ້ນສຸດຢູ່ທີ່ຕົວຂອງພວກເຮົາເອງ. ພວກເຮົາຄວນອະທິຖານເພື່ອສິ່ງທີ່ພຣະເຈົ້າກຳລັງເຮັດໃນຊີວິດຂອງຜູ້ເຊື່ອອື່ນໆ. ແລະດ້ວຍຄຳອະທິຖານເຫຼົ່ານັ້ນຈະນຳມາສູ່ການຂອບພຣະຄຸນ.

## 2. ໂກໂລຊາຍ 1:6ຂ-8

6ຂ. ຕາມທີ່ກຳລັງເກີດຜົນແລະທະວີຂຶ້ນທົ່ວໂລກຢ່າງດຽວກັບກຳລັງເປັນຢູ່ໃນຖ້າມກາງເຈົ້າທັງຫຼາຍດ້ວຍຕັ້ງແຕ່ວັນທີ່ພວກເຈົ້າໄດ້ຍິນແລະໄດ້ເຂົ້າໃຈໃນພຣະຄຸນຂອງພຣະເຈົ້າຕາມຄວາມຈິງ. 7. ດັ່ງທີ່ເຈົ້າທັງຫຼາຍໄດ້ຮຽນຮູ້ຈາກເອປາຟາຜູ້ເປັນເພື່ອນຮ່ວມງານທີ່ຮັກຂອງພວກເຮົາເພິ່ນເປັນຜູ້ປະຕິບັດອົງພຣະຄຣິດແທນເຮົາດ້ວຍໃຈສັດຊື່. 8. ເພິ່ນໄດ້ເລົ່າໃຫ້ເຮົາຟັງເຖິງຄວາມຮັກຊຶ່ງພຣະວິນຍານບໍຣິສຸດຊົງປະທານແກ່ເຈົ້າທັງຫຼາຍດ້ວຍ.

ອາຈານໂປໂລບໍ່ພຽງຂອບພຣະຄຸນພຣະເຈົ້າສຳລັບສິ່ງທີ່ພຣະອົງໄດ້ຊົງກະທຳຢູ່ພາຍໃນຊີວິດຂອງຜູ້ທີ່ເຊື່ອໃນສມັຍກ່ອນ; ທ່ານຍັງຂອບພຣະຄຸນກັບສິ່ງທີ່ພຣະເຈົ້າກຳລັງເຮັດສືບຕໍ່ໄປ. ຄືກັນກັບຂ່າວປະເສີດໄດ້ "ເກີດຜົນແລະເຕີບໃຫ່ຍໃນທົ່ວໂລກ" (ຂໍ້ 6), ອາຈານໂປໂລຮູ້ວ່າຂ່າວປະເສີດດຽວກັນນັ້ນໄດ້ເຕີບໃຫ່ຍຂຍາຍຕົວ "ໃນທ້າມກາງພວກເຈົ້ານັບຕັ້ງແຕ່ມື້ທີ່ເຈົ້າໄດ້ຍິນແລະເຂົ້າມາຮູ້ຈັກພຣະຄຸນຂອງພຣະເຈົ້າແທ້ໆນັ້ນ." ຄວາມເຊື່ອຂອງຄຣິສຕະຈັກເຕີບໂຕຂຶ້ນ, ເພີ້ມຂຶ້ນ, ແລະເກີດໝາກອອກຜົນ.

ອັນນີ່ງພວກເຮົາອາດຈະສົງສັຍວ່າ, ຄວາມເຊື່ອແລະການເກີດຜົນຂອງຜູ້ທີ່ເຊື່ອໃນເມືອງໂກໂລຊາຍແມ່ນກ່ຽວພັນກັນໂດຍກົງກັບຄຳອະທິຖານທີ່ບໍ່ຢຸດຢັ້ງຂອງທ່ານໂປໂລສຳລັບພວກເຂົາຢ່າງໃດ. ທ່ານຢາໂກໂບໄດ້ຂຽນວ່າ, "ຄຳອ້ອນວອນຂອງຜູ້ຊອບທັມມີຣິດສັກສິດເຮັດໃຫ້ເກີດຜົນ" (ຢາໂກໂບ 5:16), ແລະພຣະເຈົ້າປາຖນາທີ່ຈະຕອບຄຳອະທິຖານຂອງພວກເຮົາ. ພຣະເຈົ້າຮັກທີ່ຈະຕອບຄຳອະທິຖານທີ່ສອດຄ່ອງກັບຄວາມຕັ້ງໃຈແລະຕາມພຣະປະສົງຂອງພຣະອົງສຳລັບຊີວິດຂອງພວກເຮົາ. ສິ່ງນຶ່ງທີ່ສອດຄ່ອງກັບຄວາມຕັ້ງໃຈແລະພຣະປະສົງຂອງພຣະອົງແມ່ນເພື່ອໃຫ້ຊາວຄຣິສຕຽນໄດ້ຮັບໝາກຜົນແລະເພີ່ມຂຶ້ນໃນພຣະກິດຕິຄຸນຂອງພຣະບຸດຂອງພຣະອົງ, ພຣະເຢຊູຄຣິດ, ຕໍ່ຈາກນັ້ນ, ພຣະເຈົ້າ "ຢາກໃຫ້ທຸກຄົນໄດ້ຮັບຄວາມລອດແລະມາສູ່ການສັງເກດຮູ້ຄວາມຈິງ" (1 ຕີໂມທຽວ 2:4). ວິທີທີ່ສອງທີ່ພວກເຮົາຈະອະທິຖານແມ່ນເພື່ອພຣະກຽດສະງ່າຣາສີຂອງພຣະເຈົ້າແລະຄວາມເປັນຢູ່ຂອງຄຣິສຕະຈັກທີ່ຕິດພັນຢູ່ກັບຜູ້ພຣະເຈົ້າໃຊ້ເພື່ອຊ່ວຍພວກເຮົາໃຫ້ເຕີບໃຫ່ຍໃນພຣະຄຣິດ. ອາຈານໂປໂລບໍ່ໄດ້ກ່າວອ້າງເຖິງການອະທິຖານດ້ວຍວິທີນີ້, ແຕ່ເມື່ອການອ້າງເຖິງເອປາຟາກໍເຕືອນສະຕິພວກເຮົາກ່ຽວກັບບົດບາດສຳຄັນທີ່ຄົນອື່ນໆໄດ້ປະຕິບັດໃນການປະຕິບັດສາສນາກິດແລະການປະກາດຂ່າວປະເສີດ. ມັນໄດ້ເຕືອນພວກເຮົາວ່າ, ໃນຂນະທີ່ພວກເຮົາສະ

ແດງຄວາມຂອບພຣະຄຸນຕໍ່ພຣະເຈົ້າສຳລັບການຊົງທຳງານຂອງພຣະອົງໃນຊີວິດຂອງຜູ້ເຊື່ອຄົນອື່ນ, ພວກເຮົາຄວນອະທິຖານເພື່ອຜູ້ທີ່ພຣະເຈົ້າໃຊ້ເພື່ອເຮັດວຽກງານຂອງພຣະອົງໃຫ້ສຳເຣັດໃນຊີວິດຂອງພວກເຮົາ.

ພວກເຮົາຮູ້ເຣື່ອງກ່ຽວກັບເອປາຟາພຽງເລັກນ້ອຍ, ຜູ້ທີ່ມີບົດບາດສຳຄັນໃນຊີວິດແລະການເຕີບໃຫຍ່ຂອງຄຣິສຕະຈັກໂກໂລຊາຍ. ປະກົດຂຶ້ນວ່າທ່ານໄດ້ຢູ່ໃນຄຸກກັບໂປໂລໃນຊ່ວງເວລານຶ່ງຂອງເວລາທີ່ອັຄສາວົກໄດ້ຖືກຂັງຄຸກຄັ້ງທຳອິດໃນກຸງໂຣມ, ນັບຕັ້ງແຕ່ອາຈານໂປໂລໄດ້ກ່າວເຖິງທ່ານໃນຈົດໝາຍສະບັບສັ້ນໆຂອງໂປໂລຕໍ່ຟີລີໂມນ (ຟີລີໂມນ 23). ຢ່າງໃດກໍຕາມ, ເອປາຟາ, ອາດມາຈາກການຈັດຕັ້ງຂອງຜູ້ທີ່ຢູ່ໃນເມືອງໂກໂລຊາຍ; ທ່ານບໍ່ພຽງແຕ່ປະຕິບັດຕໍ່ພວກເຂົາໃນຂນະທີ່ຢູ່ກັບພວກເຂົາ, ທ່ານຍັງສືບຕໍ່ທາງການອະທິຖານຂອງທ່ານ.

ເຖິງແມ່ນວ່າໃນຖານະເປັນຜູ້ນຳແລະຜູ້ແນະນຳໃນການອະທິຖານຂອງພວກເຮົາ, ພວກເຮົາກໍຄວນອະທິຖານເພື່ອພວກເພິ່ນ, ຜູ້ທີ່ເຮັດໜ້າທີ່ເປັນ "ເອປາຟາ" ໃນຊີວິດຂອງພວກເຮົາ. ເພື່ອສຸຂພາບດີ, ຈົດຈໍ່ໃສ່ກັບການອະທິຖານເພື່ອຊຸກຍູ້ຄົນຜູ້ທີ່ຊ່ວຍພວກເຮົາໃຫ້ເຕີບໃຫຍ່ທາງຊີວິດຝ່າຍວິນຍານແລະການເຮັດວຽກງານເຜີຍແຜ່ຂ່າວປະເສີດ. ຄິດເຖິງບຸກຄົນທີ່ນຳພາທ່ານໄປສູ່ຄວາມເຊື່ອໃນພຣະຄຣິດ. ໃນຂນະທີ່ອາດມີບາງຄົນເຮັດຕາມແບບຢ່າງໃນພຣະຄັມພີແລະໄດ້ຖວາຍຊີວິດຂອງພວກເຂົາໃຫ້ກັບພຣະຄຣິດເພາະພວກເຂົາໄດ້ສຶກສາຮູ້ດ້ວຍຕົວເອງ, ຊຶ່ງຊ່ວຍໃຫ້ມີຢ່າງນ້ອຍນຶ່ງຄົນທີ່ໄດ້ແບ່ງປັນຂ່າວປະເສີດໃຫ້ກັບພວກເຮົາ. ບາງທີອາດຈະເປັນນັກເທດ, ຄຣູສອນພຣະຄັມພີ, ຫຼືໝູ່ເພື່ອນ. ຜູ້ທີ່ໄດ້ກ້າວເຂົ້າມາໃນຊີວິດຂອງພວກເຮົາໄດ້ເວົ້າໄດ້ເຮັດແນວນັ້ນຈາກຈຸດອັນສຳຄັນຂອງຊີວິດທີ່ຕ້ອງເພິ່ງພາໃນພຣະເຈົ້າຜ່ານທາງການອະທິຖານ. ຜູ້ທີ່ແບ່ງປັນຂ່າວປະເສີດກັບພວກເຮົາດ້ວຍຕົນເອງແມ່ນຜູ້ທີ່ໄດ້ຮັບມອບໝາຍໜ້າທີ່ແລະການອະທິຖານຂອງຜູ້ອື່ນ. ຜູ້ທີ່ແບ່ງປັນຂ່າວປະເສີດໃຫ້ກັບທ່ານບໍ່ໄດ້ໄປບ່ອນນັ້ນນອກເໜືອຈາກການອະທິຖານເພື່ອຄົນອື່ນ. ແນ່ນອນວ່າຄົນອື່ນຕ້ອງອະທິຖານເພື່ອພວກເຂົາ, ຂໍໃຫ້ພຣະເຈົ້າປົກປ້ອງພວກເຂົາ, ເຮັດໃຫ້ພວກເຂົາໃຫຍ່ຂຶ້ນ, ແລະເຮັດໃຫ້ພວກເຂົາມີປັນຍາ. ແລະຜູ້ອະທິຖານໄດ້ຮັບນິມິດໝາຍນີ້ແລະອະທິຖານເພື່ອກຸ່ມຄົນເຫຼົ່ານັ້ນ. ທ່ານໄດ້ຮັບພອນຜ່ານລະບົບຕ່ອງໂສ້ການອະທິຖານທາງປວັດສາດ! ຄວາມຈິງສິ່ງນີ້ຄວນກະຕຸ້ນຕົວເຮົາໃຫ້ອະທິຖານເພື່ອບຸກຄົນທີ່ເຮັດໜ້າທີ່ສາສນາທູດແລະຮັບໃຊ້. ພຣະເຈົ້າອາດຈະບໍ່ເຄີຍເອີ້ນທ່ານໃຫ້ເປັນສິດຍາພິບານ, ຜູ້ນຳໃນການໄຫວ້ວອນອະທິຖານ, ຫຼືຜູ້ສອນພຣະຄັມພີ, ແຕ່ແນ່ນອນທ່ານສາມາດອະທິຖານໄດ້, ທ່ານສາມາດອະທິຖານເພື່ອໃຫ້ຜູ້ນຳຄຣິສຕະຈັກຂອງທ່ານສິດສອນແລະກ່າວພຣະຄຳດ້ວຍຄວາມກ້າຫານ. ທ່ານສາມາດອະທິຖານເພື່ອຜູ້ຮັບໃຊ້ເຕັມເວລາໄດ້ຮັບການປົກປ້ອງແລະຢ່າລືມຄວາມຮັກດັ່ງເດີມຂອງພວກເຂົາຕໍ່ພຣະເຢຊູ. ທ່ານສາມາດອະທິຖານເພື່ອຜູ້ນຳໃນການສຶກສາພຣະຄັມພີ. ທ່ານສາມາດອະທິຖານເພື່ອຜູ້ທີ່ກຳລັງສັ່ງສອນພຣະຄຳແກ່ລູກໆຫຼານໆຂອງພວກທ່ານ. ແລະທ່ານຍັງສາມາດອະທິຖານເພື່ອພີ່ນ້ອງຂອງທ່ານເອງ, ວ່າພຣະເຈົ້າໃຫ້ທ່ານເປັນຄົນນຶ່ງທີ່ນຳຂ່າວປະເສີດຂອງພຣະຄຣິດມາສູ່ຜູ້ຄົນທີ່ຢູ່ອ້ອມຮອບຕົວທ່ານ.

## 3. ໂກໂລຊາຍ 1:9-12

*9.* ເພາະເຫດນີ້ນັບຕັ້ງແຕ່ວັນທີ່ເຮົາໄດ້ຍິນເຮົາກໍ່ບໍ່ໄດ້ຢຸດໃນການອ້ອນວອນເພື່ອພວກເຈົ້າທັງຫຼາຍທູນຂໍເພື່ອໃຫ້ພວກເຈົ້າປະກອບເຕັມໄປດ້ວຍຄວາມຮູ້ເຖິງນໍ້າພຣະທັຍຂອງພຣະອົງ, ໃນສັບພຣະປັນຍາແລະຄວາມເຂົ້າໃຈຊຶ່ງມາຈາກພຣະວິນຍານ. *10.* ເພື່ອເຈົ້າທັງຫຼາຍຈະໄດ້ດຳເນີນຊີວິດຢ່າງທີ່ຄວນຕໍ່ອົງພຣະຜູ້ເປັນເຈົ້າແລະເປັນທີ່ຊອບພຣະທັຍພຣະອົງຢ່າງແທ້ຈິງ, ໃຫ້ເກີດຜົນໃນການດີທຸກຢ່າງແລະຈະເຣີນຂຶ້ນໃນຄວາມຮູ້ເຖິງພຣະເຈົ້າ. *11.* ຂໍໃຫ້ເຈົ້າທັງຫຼາຍມີກຳລັງແຂງແຮງຂຶ້ນທຸກຢ່າງໂດຍຣິດເດດອັນຮຸ່ງເຮືອງຂອງພຣະອົງເພື່ອຈະສາມາດອົດທົນທຸກສິ່ງແລະມີຄວາມໝັ້ນພຽນດ້ວຍຄວາມຍິນດີ. *12.* ຈົ່ງຂອບພຣະຄຸນພຣະບິດາຜູ້ຊົງບັນດານໃຫ້ເຈົ້າທັງຫຼາຍສົມກັບທີ່ຈະເຂົ້າສ່ວນໄດ້ຮັບມໍຣະດົກດ້ວຍກັນກັບໄພ່ພົນໃນຄວາມສວ່າງ.

ວິທີທີ່ສາມທີ່ພວກເຮົາສາມາດອະທິຖານເພື່ອສະງ່າຣາສີຂອງພຣະອົງແລະຄວາມສົມບູນຂອງຄຣິສຕະຈັກແມ່ນເພື່ອການເຕີບໃຫ່ຍທາງດ້ານຈິດວິນຍານຂອງຜູ້ເຊື່ອຄົນອື່ນໆ. ພວກເຮົາສາມາດແບ່ງແຍກຂໍ້ພຣະຄັມພີນີ້ໄດ້ຫຼາຍວິທີ, ແຕ່ພິຈາລະນາລາຍລະອຽດຂອງຄວາມຕ້ອງການອະທິຖານຕໍ່ລົງໄປນີ້:

❖ **ອະທິຖານວ່າຂໍໃຫ້ພວກເຂົາເຕັມໄປດ້ວຍຄວາມຮູ້ຈັກກ່ຽວກັບພຣະປະສົງຂອງພຣະເຈົ້າ.** ເພື່ອ “ເຕີມເຕັມ” ໂດຍບາງສິ່ງບາງຢ່າງໂດຍການຄວບຄຸມດູແລດ້ວຍຄຳອະທິຖານ. ເຖິງແມ່ນວ່າພວກເຮົາຈະເຕັມໄດ້ດ້ວຍ (ການບໍລິຫານແລະຄວບຄຸມດູແລ) ໂດຍພຣະວິນຍານບໍຣິສຸດ (ເອເຟໂຊ 5:18), ພວກເຮົາຄວນອະທິຖານຂໍໃຫ້ຜູ້ທີ່ເຊື່ອໄດ້ຮູ້ຈັກກ່ຽວກັບແຜນການຂອງພຣະເຈົ້າແລະນຳພາພວກເຂົາຄວບຄຸມດູແລມັນຢ່າງເຕັມທີ່. ນີ້ເປັນການປະກອບຄວາມເຂົ້າໃຈແລະແຜນການຂອງພຣະເຈົ້າ(“ສະຕິປັນຍາ”)ແລະການນຳໃຊ້ຄວາມຈິງ(“ຄວາມອ່ອນແອທາງຈິດວິນຍານ”).

❖ **ຈົ່ງອະທິຖານຂໍໃຫ້ພວກເຂົາໄດ້ຮັບຄວາມເຂັ້ມແຂງມາຈາກພຣະເຈົ້າ.** ບໍ່ມີຜູ້ເຊື່ອຄົນໃດສາມາດເພິ່ງພາຕົນເອງໄດ້, ດັ່ງນັ້ນພວກເຮົາຂໍໃຫ້ພຣະເຈົ້າທຳງານໃນຊີວິດຂອງຄົນທີ່ເຊື່ອອື່ນໆເພື່ອພວກເຂົາຈະໄດ້ຮັບຄວາມເຂັ້ມແຂງໃນພຣະອົງ. ໃນການປະເຊີນໜ້າກັບສິ່ງທີ່ທ້າທາຍໃນຊີວິດ, ຜູ້ທີ່ເຊື່ອຕ້ອງການຄວາມເຂັ້ມແຂງສຳລັບ “ຄວາມອົດທົນແລະການລໍຄອຍ,” ແລະນັ້ນເປັນຄວາມເຂັ້ມແຂງຜ່ານທາງການຊົງພຣະຊົນຢູ່ຂອງພຣະຄຣິດ.

❖ **ອະທິຖານວ່າພວກເຂົາຈະຂອບພຣະຄຸນພຣະເຈົ້າດ້ວຍຄວາມຊົມຊື່ນຍິນດີ.** ພວກເຮົາຄວນຈະອະທິຖານວ່າໃຫ້ຜູ້ທີ່ເຊື່ອບໍ່ໃຫ້ຫຼົງລືມການຊົງທຳຣາຊກິດຂອງພຣະເຈົ້າໃນຊີວິດຂອງເຂົາ. ການຮັບຮູ້ຢ່າງຕໍ່ເນື່ອງດັ່ງກ່າວເຮັດໃຫ້ພວກເຮົາດຳເນີນຊີວິດດ້ວຍຄວາມກະຕັນຍູຕໍ່ພຣະອົງ. ຫຼາຍຄົນທີ່ເຊື່ອໃນພະລັງແລະອິດທິພົນຂອງຄຣິສຕະຈັກອາເມຣິກັນແມ່ນມືດມົວ. ຂ້າພະເຈົ້າສົງສັຍວ່ານັ້ນແມ່ນຍ້ອນພວກເຮົາລະເລີຍຕໍ່ການອະທິຖານຄືກັບການອະທິຖານເພື່ອເຊິ່ງກັນແລະກັນ. ສິ່ງນຶ່ງທີ່ເຫັນໄດ້ຊັດເຈນເຂັ້ມແຂງແລະພຣະຄຣິດໄດ້ຮັບກຽດເມື່ອໄພ່ພົນຂອງພຣະອົງອະທິຖານຢ່າງບໍ່ຢຸດຢັ້ງເພື່ອກັນແລະກັນ-ແລະໃນເວລາທີ່ພວກເຮົາໃຫ້ການອະທິຖານເປັນສິ່ງສຳຄັນ.

## ການນຳໃຊ້ໃນຊີວິດ.

**ທ່ານຈະດຳເນີນຊີວິດຕາມຄວາມຕັ້ງໃຈຂອງທ່ານຕໍ່ພຣະຄຣິສໂດຍຜ່ານຄຳອະທິຖານແນວໃດ? ຈົ່ງເລືອກຂໍ້ນຶ່ງເປັນແບບວິທີໃຊ້ຕໍ່ລົງໄປນີ້.**

❖ **ອະທິຖານຕອນເຊົ້າ.** ການອະທິຖານເປັນເໝືອນກ້າມເນື້ອ; ຖ້າທ່ານບໍ່ໃຊ້ມັນ, ມັນຈະບໍ່ມີກຳລັງແລະອ່ອນເພັຽລົງ, ຖ້າທ່ານບໍ່ໝັ່ນອະທິຖານ, ຈົ່ງໃຫ້ຄ ຳໝັ້ນສັນຍາທີ່ຈະເລີ້ມຕົ້ນອະທິຖານໃນແຕ່ລະວັນໃນອາທິດ. ກ່ອນທີ່ທ່ານຈະອອກໄປເຮັດບາງສິ່ງບາງຢ່າງໃນແຕ່ລະເຊົ້າ, ອະທິຖານວ່າພຣະເຈົ້າຈະໃຊ້ທ່ານທັງວັນ. ຈົ່ງອະທິຖານເພື່ອສິດຍາພິບານແລະຜູ້ນຳຂອງທ່ານທີ່ຄຣິສຈັກຂອງທ່ານ. ອະທິຖານເພື່ອຜູ້ເຊື່ອທີ່ຢູ່ອ້ອມຮອບຕົວທ່ານ.

❖ **ຕັ້ງໃຈຈົດຈໍ່ກັບການອະທິຖານ.**ໃຫ້ຄຳໝັ້ນສັນຍາວ່າຈະອະທິຖານເປັນປະຈຳໃນແຕ່ລະວັນບໍ່ວ່າຈະມີເວລາຫຼືບໍ່ມີເວລາ. ໃຊ້ເວລາໃນການອະທິຖານຕາມເວລາທີ່ມີເມື່ອທ່ານນັ່ງຢູ່ຊື່ໆແລະເວົ້າລົມກັບພຣະເຈົ້າໂດຍທີ່ບໍ່ໄດ້ນັດໝາຍ. ເກັບບັນທຶກການອະທິຖານຂອງທ່ານໄວ້ເພື່ອສຳຫຼວດຄືນຫຼັງວ່າພຣະເຈົ້າຕອບເຂົາແນວໃດ.

❖ **ສຸມໃຈໃສ່ການອະທິຖານ.** ຈົດບັນຖືກລາຍລະອຽດໂດຍອີງໃສ່ສາມວິທີທີ່ກ່າວມານີ້ເພື່ອອະທິຖານເພື່ອກັນແລະກັນ. ບອກລາຍຊື່ບຸກຄົນທີ່ທ່ານຕ້ອງການອະທິຖານເພື່ອ, ອະທິຖານໃຫ້ກັບເຂົາໂດຍສະເພາະ.

ບໍ່ມີໃຜມັກທີ່ຈະຮັບສັນຍາທີ່ຫຍຸ້ງຍາກຫຼືຕ້ອງການທີ່ຈະຍົກສຽງຂຶ້ນເມື່ອພວກເຮົາເອື້ອມມືອອກໄປຫາບາງສິ່ງບາງຢ່າງທີ່ສຳຄັນ, ໂດຍສະເພາະໃນເວລາທີ່ຮີບດ່ວນ. ແຕ່ໂຊກດີທີ່ພວກເຮົາຍັງມີພຣະເຈົ້າເຝົ້າລະວັງຮັກສາພວກເຮົາຢູ່ສເມີ.

ອຸປຖັມໂດຍລາວຊາວເທີນບັບຕິດສັມພັນ www.lsbf.org ແປໂດຍ VR.